ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກອງສະໜາມບິນລາວ

ເລກທີ 2432 ກສລ
ນະຄອນຫລວງວຽງຈັນ, ວັນທີ 11 ມິຖຸນາ 2024

## ໜັງສືແຈ້ງເຊີນປະມູນເປີດກວ້າງ

1. ກອງສະໜາມບິນລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມ ເຂົ້າຍື່ນຊອງປະມູນເປີດກວ້າງສໍາລັບການສ້ອມແປງ ແລະ ປັບປຸງຖ່າຍ ຫ້ອງນໍ້າ, ຫ້ອງກຽດຕິຍົດ ແລະ ຮື້ມ້າງ-ຕິດຕັ້ງຝາແກ້ວເກົ່າ ຢູ່ອາຄານໂດຍສານສະໜາມບິນສາກົນຫລວງພະບາງ, ໄລຍະການປະຕິບັດວຽກແມ່ນ 30 ວັນ;
2. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸທິເໝາະສົມ, ມີໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ ທີ່ກ່ຽວພັນກັບການກໍ່ສ້າງ-ສ້ອມແປງເຄຫາສະຖານ ປະຈໍາປີ 2024;
4. ບໍລິສັດທີ່ມີຄຸນນະວຸທິເໝາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກອງສະໜາມບິນລາວ, ຜູ້ຮັບຜິດຊອບ: ທ່ານ ຈັນນະນີ ຄູນໄຊຍະບົວສີ ໂທລະສັບ: 020 55686696 ແລະ ທ່ານ ນາງ ດາລີນ້າ ພົມມະຈັກ ໂທລະສັບ: 020 55002931 ໃນເວລາລັດຖະການ;
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນໜັງສືສະເໜີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ວັນທີ 07 ມິຖຸນາ 2024 ເປັນຕົ້ນໄປ, ໃນລາຄາ 3,000,000 ກີບ, ຈໍານວນເງິນດັ່ງກ່າວນີ້ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ;
6. ຊອງປະມູນຕ້ອງສົ່ງທີ່ຢູ່ລຸ່ມນີ້,ໃນເວລາ ຫລື ກ່ອນເວລາ 14:00 ນາທີ ຂອງວັນທີ 18 ກໍລະກົດ 2024 ທີ່ຫ້ອງປະຊຸມເບີ 03 ກອງສະໜາມບິນລາວ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 14:10 ນາທີ ຂອງວັນທີ ແລະ ສະຖານທີ່ຮັບຊອງປະມູນ ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາຕາມສະຖານທີ່ຂ້າງລຸ່ມນີ້;
7. ທຸກໆ ຊອງປະມູນຕ້ອງໄດ້ມີໜັງສືຄໍ້າປະກັນການປະມູນ ເປັນເງິນສົດ, ຫລື ແຊັກເງິນສົດ(ວິຊ້າທະນາຄານ) ຫລື ໜັງສືຄໍ້າປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫລຸດ 2% ຂອງລາຄາສະເໜີເຂົ້າປະມູນ.
8. ທີ່ຢູ່: ກອງສະໜາມບິນລາວ, ໂທລະສັບ: 021 520542. ສໍານັກງານຕັ້ງຢູ່: ສະໜາມບິນສາກົນວັດໄຕ, ເມືອງສີໂຄດຕະບອງ, ນະຄອນຫລວງວຽງຈັນ.

ເຊັນແທນ ຫົວໜ້າກອງ
ຮອງຫົວໜ້າກອງ

ຄໍາສະຫວັນ ສີສົມບູນ
Khamsavan SYSOMBOUN